ທົ່ວປະເທດ ປັກດຳເຂົ້ານາແຊງ ໄດ້ແລ້ວເກືອບ 70 %
ມາຮອດປະຈຸບັນ ຊາວກະສິກອນ ໃນທົ່ວປະເທດ ສາມາດປັກດຳເຂົ້ານາແຊງ ໄດ້ແລ້ວ 96 ພັນກວ່າ
ເຮັກຕາ ເທົ່າກັບ 69% ຄາດວ່າຈະໃຫ້ສຳເລັດ ໃນທ້າຍເດືອນກຸມພາ ນີ້. ຕາມບົດລາຍງານ
ສະພາບພົ້ນເດັ່ນ ການປະຕິບັດວຽກງານປະຈຳເດືອນກຸມພາ ຂອງຂະແໜງກະສິກຳ ແລະ ປ່າໄມ້
ໃຫ້ຮູ້ວ່າ: ການປັກດຳ ເຂົ້ານາແຊງ ຂອງຊາວກະສິກອນ ໃນທົ່ວປະເທດ ມາຮອດປະຈຸບັນ
ສາມາດປະຕິບັດໄດ້ 69% ຂອງເນືອທີ່ແຜນການ ທັງໝົດເກືອ 140.000 ເຮັກຕາ.

ເຖິງວ່າຈະສຳເລັດເປັນສ່ວນຫລາຍກໍຕາມແຕ່ຍັງມີບາງເຂດ ແຂວງ ພົບບັນຫາ ແລະ
ໄດ້ຮັບກະທົບຕໍ່ການຜະລິດ ໂດຍສະເພາະແມ່ນ ສັດຕູ ພືດທຳລາຍເຄື່ອງປູກ,
ເກີດສະພາບໄພແຫ້ງແລ້ງ ເນື່ອງຈາກແມ່ນ້ຳຫລາຍສາຍບົກແຫ້ງຜິດປົກກະຕິ
ເພື່ອແກ້ໄຂສະພາບດັ່ງກ່າວ ຊາວກະສິກອນໄດ້ຫັນມາປູກພືດ-ຜັກ ປະເພດຕ່າງໆ
ທີ່ໃຊ້ນ້ຳໜ້ອຍສ້າງລາຍຮັບທົດແທນການປູກເຂົ້າ.

ສ່ວນການປູກພືດລະດູແລ້ງ ທີ່ຊາວກະສິກອນໄດ້ປູກແລ້ວ ມີຈຳນວນ 76 ພັນກວ່າເຮັກຕາ
ເທົ່າກັບ 46% ຂອງແຜນການ ຄາດຄະເນຜົນຜະລິດຈະໄດ້ຮັບຫລາຍກວ່າ 1 ລ້ານ ໂຕນ,
ໃນນັ້ນພືດທີ່ປູກຫລາຍກວ່າໝູ່ ແມ່ນສາລີແຂງ ຢູ່ແຂວງອຸດົມໄຊ 4 ພັນກວ່າເຮັກຕາ,
ແຂວງໄຊຍະບູລີ 1 ພັນກວ່າເຮັກຕາ, ແຂວງບໍລິຄຳໄຊ ເກືອບ 1 ພັນເຮັກຕາ, ນະຄອນຫລວງວຽງຈັນ 500
ກວ່າເຮັກຕາ ແລະ ແຂວງວຽງຈັນ ເກືອບ 500 ເຮັກຕາ.
ນອກຈາກສາລີແລ້ວຍັງມີພືດຜັກຕ່າງໆຕື່ມອີກ ./.

ທີ່ມາຂອງຂ່າວ:
 1 / 1